# ມິຊຊາສຳລັບຜູ້ລ່ວງລັບ

**ພຣະວໍລະສານໂດຍນັກບຸນລູກາ 24, 13-35**

ໃນວັນດຽວກັນນັ້ນ ສາວົກສອງຄົນພາກັນໄປບ້ານເອມາອຸສ ຫ່າງຈາກນະຄອນເຢຣູຊາແລມປະມານສິບກວ່າກິໂລແມັດ. ທັງສອງສົນທະນາກັນເຖິງເຫດການທີ່ຫາກໍໄດ້ເປັນມາ. ເວລາທີ່ສົນທະນາກັນໄປນັ້ນ, ພຣະເຢຊູເຈົ້າສະເດັດມາຮ່ວມເດີນທາງກັບພວກເຂົາ, ພວກເຂົາເຫັນພຣະອົງແຕ່ຈື່ບໍ່ໄດ້. ພຣະອົງຖາມພວກເຂົາວ່າ: ພວກເຈົ້າສົນທະນາກັນເຖິງເລື່ອງຫຍັງ? ຄືວ່າໂສກເສົ້າແທ້. ຜູ້ໜຶ່ງຊື່ວ່າເກຣໂອຟາສຕອບວ່າ: ໝົດເມືອງເຢຣູຊາແລັມມີແຕ່ທ່ານຜູ້ດຽວບໍ ບໍ່ຮູ້ເລື່ອງທີ່ເກີດຂຶ້ນມາໃນສອງສາມມື້ນີ້? ພຣະອົງຈຶ່ງຖາມວ່າ: ແມ່ນເລື່ອງຫຍັງ? ພວກເຂົາຕອບວ່າ: ແມ່ນເລື່ອງພຣະເຢຊູຊາວນາຊາແລັດ ຜູ້ເປັນປະພາສົກທີ່ມີອຳນາດໃນກິດຈະການແລະວາຈາຕໍ່ໜ້າພຣະເປັນເຈົ້າ ແລະຕໍ່ໜ້າປະຊາຊົນ. ພວກເຈົ້າຄະນະສົງແລະພວກຜູ້ໃຫຍ່ໄດ້ມອບພຣະອົງແລະຕັດສິນປະຫານຊີວິດຄຶງໃສ່ກາງເຂນ. ສ່ວນພວກເຮົາ, ພວກເຮົາຫວັງວ່າທ່ານຜູ້ນີ້ເອງຈະເປັນຜູ້ປົດປ່ອຍຊົນຊາດອິສຣາແອນ , ແຕ່ຄືວ່ານັ້ນແລ້ວ, ເຫດການກໍຜ່ານໄປໄດ້ສາມວັນແລ້ວ. ແຕ່ມີຍິງລາງຄົນໃນໝູ່ພວກເຮົາມາເວົ້າໃຫ້ພວກເຮົາມີຄວາມສົນລະວົນໃຈ ຍ້ອນພວກເຮົາໄດ້ໄປພຣະຄູຫາແຕ່ເຊົ້າມືດ, ແຕ່ບໍ່ໄດ້ເຫັນພຣະສົບຂອງພຣະອົງ. ພວກເຂົາຈຶ່ງຫລົບມາບອກວ່າ ໄດ້ເຫັນເທວະດາປະຈັກມາ ແລະບອກພວກເຂົາວ່າ: « ພຣະອົງຍັງມີຊີວິດຢູ່ ». ໝູ່ພວກເຮົາລາງຄົນກໍພາກັນໄປຄູຫາ ແລະພົບເຫັນສິ່ງຕ່າງໆຄືພວກຜູ້ຍິງໄດ້ເວົ້າ, ແຕ່ສ່ວນພຣະອົງນັ້ນ ພວກເຂົາບໍ່ໄດ້ເຫັນ. ພຣະເຢຊູເຈົ້າກ່າວກັບພວກເຂົາວ່າ: ພວກອັບປັນຍາເອີຍ! ເປັນຫຍັງຈຶ່ງບໍ່ຮ້ອນໃຈເຊື່ອສິ່ງທີ່ພວກປະພາສົກໄດ້ກ່າວໄວ້? ບໍ່ຮູ້ຈັກບໍວ່າພຣະກຣິສໂຕຈະຕ້ອງທົນທຸກທໍລະມານເສຍກ່ອນ, ຈຶ່ງໄດ້ຮັບສີມຸງຄຸນ. ແລ້ວພຣະອົງກໍໄດ້ອະທິບາຍພຣະຄຳພີທຸກຂໍ້ທີ່ກ່ຽວເຖິງພຣະອົງຕາມທີ່ປະພາສົກຕ່າງໆໄດ້ກ່າວໄວ້ ດ້ວຍເລີ່ມຈາກໂມແຊໄປໃຫ້ພວກເຂົາຟັງ.

ເມື່ອເດີນໄປໃກ້ຈະຮອດບ້ານແລ້ວ, ພຣະອົງກໍທຳທ່າເດີນຕໍ່ໄປ, ແຕ່ສາວົກທັງສອງດຶງຈ່ອງພຣະອົງໄວ້ ທັງເວົ້າວ່າ: « ເຊີນພັກເຊົາຢູ່ນຳພວກເຮົາເສຍກ່ອນ, ຍ້ອນເວລາໃກ້ຈະຄ່ຳແລ້ວ ». ພຣະອົງຈຶ່ງເຂົ້າໃນບ້ານນຳພວກເຂົາ. ເມື່ອຮ່ວມໂຕະຮັບປະທານອາຫານກັບສາວົກທັງສອງ, ພຣະອົງຊົງຈັບເອົາປັງ, ຊົງຖະຫວາຍພຣະພອນ ແລ້ວບິອອກຍື່ນໃຫ້ພວກເຂົາ. ເວລານັ້ນ, ຕາພວກເຂົາກໍເປີດອອກແລະຈື່ພຣະອົງໄດ້ ແຕ່ພຣະອົງໄດ້ຫາຍຕົວໄປແລ້ວ. ສາວົກທັງສອງຈຶ່ງເວົ້າກັນວ່າ: ເຫັນບໍ, ເມື່ອພຣະອົງອະທິບາຍພຣະຄຳພີສູ່ພວກເຮົາຕາມທາງນັ້ນ ໃຈພວກເຮົາຈຶ່ງຮ້ອນວູ່ໆ? ເວົ້າແລ້ວ, ພວກເຂົາກໍລຸກຂຶ້ນກັບເມືອນະຄອນເຢຣູຊາແລັມ. ພວກເຂົາໄດ້ພົບສາວົກທັງສິບເອັດກັບພວກລູກສິດອື່ນຊຸມກັນຢູ່. ພວກສາວົກໄດ້ບອກພວກເຂົາວ່າ: ພຣະອົງເຈົ້າໄດ້ກັບຄືນຊີບແທ້ແລ້ວ. ແລະໄດ້ປະຈັກມາຫາຊີມອນ. ສ່ວນພວກສາວົກທັງສອງກໍເລົ່າເຫດການທີ່ເປັນມາຕາມທາງແລະບອກວ່າພວກເຂົາຈື່ພຣະອົງໄດ້ ໃນເວລາພຣະອົງຊົງບິປັງ.

*ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ*

**ບົດແບ່ງປັນ: ລກ 24, 13-35**

ຫລັງຈາກໄດ້ຟັງວາຈາຂອງພຣະເຈົ້າແລ້ວ, ຈຸດທຳອິດທີ່ພໍ່ຢາກແບ່ງປັນນຳພວກເຮົາຄື ຄວາມໂສກເສົ້າຂອງລູກສິດສອງຄົນຫລັງຈາກການສິ້ນພຣະຊົນຂອງພຣະເຢຊູເຈົ້າ. ພວກເຂົາໄດ້ສິ້ນຫວັງແລະກັບຄືນສູ່ບ້ານເກົ່າເມືອງເດີມຂອງຕົນບ້ານເອມມາອຸສ. ເປັນຫຍັງພວກລູກສິດທັງສອງຈຶ່ງໂສກເສົ້າ? ຍ້ອນການຈາກໄປຂອງພຣະເຢຊູເຈົ້າຜູ້ເປັນອາຈານຂອງພວກເຂົາບໍ? ພໍ່ຄິດວ່າສິ່ງນັ້ນບໍ່ແມ່ນສາເຫດຕົ້ນຕໍຂອງຄວາມໂສກເສົ້ານີ້. ສິ່ງທີ່ເຮັດໃຫ້ພວກເຂົາໂສກເສົ້າແລະສິ້ນຫວັງແມ່ນຄວາມບໍ່ເຂົ້າໃຈຄຳສອນທີ່ພຣະເຢຊູເຈົ້າໄດ້ສັ່ງສອນພວກເຂົາເວລາພຣະອົງຍັງຢູ່ກັບພວກເຂົາ. ຖ້າພວກເຮົາສັງເກດຄຳຕອບຂອງເກຣໂອຟາສໜຶ່ງໃນພວກລູກສິດສອງຄົນທີ່ຕອບພຣະເຢຊູເຈົ້າເທິງເສັ້ນທາງເອມອາອຸສ, ພວກເຮົາຈະເຫັນວ່າເປັນຄຳຕອບທີ່ຍັງບໍ່ທັນຄົບຖ້ວນດັ່ງທີ່ພຣະເຢຊູເຈົ້າໄດ້ສັ່ງສອນພວກເຂົາ. ເພາະລູກສິດຜູ້ນີ້ກ່າວວ່າ: *« ແມ່ນເລື່ອງພຣະເຢຊູຊາວນາຊາແລັດ ຜູ້ເປັນປະພາສົກທີ່ມີອຳນາດໃນກິດຈະການແລະວາຈາຕໍ່ໜ້າພຣະເປັນເຈົ້າແລະຕໍ່ໜ້າປະຊາຊົນ. ພວກເຈົ້າຄະນະສົງແລະພວກຜູ້ໃຫຍ່ໄດ້ມອບພຣະອົງແລະຕັດສິນປະຫານຊີວິດຄຶງໃສ່ກາງເຂນ »*. ຄຳຕອບຂອງລູກສິດຜູ້ນີ້ຢຸດຢູ່ທີ່ການຕາຍຂອງພຣະເຢຊູເຈົ້າເທົ່ານັ້ນ. ແລະເຂົາບໍ່ເຂົ້າໃຈວ່າພຣະເຢຊູເຈົ້າໄດ້ຊະນະຄວາມຕາຍແລະຄືນສູ່ຊີວິດແລ້ວ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງໄດ້ປະຈັກມາຫາພວກເຂົາ ແລະຮ່ວມເດີນທາງກັບພວກເຂົາ ເພື່ອແປອະທິບາຍໃຫ້ພວກເຂົາເຂົ້າໃຈເຖິງການກັບເປັນຄືນມາຂອງພຣະອົງ. ແລະເຄື່ອງໝາຍແຫ່ງການກັບເປັນຄືນຂອງພຣະເຢຊູເຈົ້ານີ້ ບໍ່ແມ່ນແຕ່ຢູ່ທີ່ຄູຫາວ່າງເປົ່າເທົ່ານັ້ນ, ແຕ່ແມ່ນໃນພິທີກຳຂອງການບິເຂົ້າໜົມປັງ, ຊຶ່ງພວກເຮົາຮຽກວ່າ ພິທີມະຫາບູຊາມິຊຊາ.

ໃນວັນນີ້ພວກເຮົາທຸກຄົນທີ່ມາຊຸມນຸມກັນຢູ່ນີ້ລ້ວນແຕ່ເປັນເໝືອນດັ່ງພວກລູກສິດເອມມາອຸສ.ເໝືອນຢູ່ບ່ອນໃດ? ເໝືອນຢູ່ບ່ອນວ່າ ພວກເຮົາໄດ້ຟັງວາຈາຂອງພຣະເຈົ້າທີ່ປາກເວົ້າກັບພວກເຮົາກ່ຽວກັບການຕາຍແລະການກັບເປັນຄືນມາຂອງພຣະອົງ. ແລະເປັນຕົ້ນພວກເຮົາໄດ້ຮ່ວມໃນພິທີບິປັງ, ມະຫາບູຊາມິຊຊາ. ເພາະມະຫາບູຊາມິຊຊານີ້ເປັນເຄື່ອງໝາຍບອກພວກເຮົາວ່າ: ຖ້າຜູ້ໃດຮ່ວມຮັບປະທານປັງຊົງຊີວິດແລະດື່ມຈອກໂລຫິດນີ້, ຜູ້ນັ້ນຈະມີຊີວິດນິລັນດອນ. ແມ່ນວ່າເຂົາຈະຕາຍ ແຕ່ຈະກັບເປັນຄືນມາຮ່ວມກັບພຣະເຢຊູເຈົ້າ. ແລະຍ້ອນຄວາມເຊື່ອນີ້ພວກເຮົາຈຶ່ງຫວັງວ່າຜູ້ລ່ວງລັບໄປນີ້ ເມື່ອຍັງມີຊີວິດຢູ່ໄດ້ຮັບກິນປັງຊົງຊີວິດນີ້. ດັ່ງນັ້ນ, ເຖິງເຂົາຈະຈາກພວກເຮົາໄປ ແຕ່ເຂົາຈະມີຊີວິດໃໝ່ເໝືອນກັບພຣະເຢຊູເຈົ້າຜູ້ໄດ້ກັບເປັນຄືນມາຈາກພວກຜູ້ຕາຍ.

ຂໍໃຫ້ຄວາມເຊື່ອນີ້ເປັນຫລັກໝັ້ນໃນຊີວິດກຣິສຕະຊົນຂອງພວກເຮົາ ບໍ່ວ່າຜູ້ເປັນກໍຄືຜູ້ທີ່ໄດ້ຈາກພວກເຮົາໄປແລ້ວ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ